ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການນຳເຂົ້າ ແລະ ສົ່ງອອກ

ເລກທີ **1984/**ກຂອ

ນະຄອນຫຼວງວຽງຈັນ, ວັນທີ **25/04/2007**

# ບົດແນະນຳ

ເຖິງ : ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ : ແນະນຳການປະຕິບັດຄຳສັ່ງຂອງລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ກ່ຽວກັບ ການອຳນວຍຄວາມສະດວກ ໃຫ້ແກ່ ການນຳເຂົ້າ ແລະ ສົ່ງອອກສິນຄ້າ.

- ອີງຕາມ ແຈ້ງການຂອງສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 405/ຄລບ, ລົງວັນທີ 14/3/2007 ກ່ຽວກັບການປັບປຸງລະບົບການຄຸ້ມຄອງດ່ານເຂົ້າອອກ ຄືນໃໝ່.
- ອີງຕາມຄຳສັ່ງຂອງລັດຖະມົນຕີວ່າການກະຊວງອຸດສາຫະກຳແລະການຄ້າ ເລກທີ 0453/ອຄ.ກຂອ, ລົງວັນທີ 26/03/2007 ກ່ຽວກັບການອຳນວຍຄວາມສະດວກໃຫ້ແກ່ ການ ນຳເຂົ້າ ແລະ ສົ່ງອອກສິນຄ້າ.

ກົມການນຳເຂົ້າ ແລະ ສົ່ງອອກກະຊວງອຸດສາຫະກຳ ແລະ ການຄ້າ ແນະນຳມາຍັງ ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ຈັດຕັ້ງປະຕິບັດດັ່ງນີ້ :

1. ໃຫ້ສົມທົບກັບອຳນາດການ ປົກຄອງ ແລະ ຂະແໜງການທີ່ກ່ຽວຂ້ອງເພື່ອແຈ້ງໃຫ້ ຊາບ ກ່ຽວກັບ ເນື້ອໃນ ຂອງແຈ້ງການ ສະບັບເລກທີ 405/ຄລບ ລົງວັນທີ 14/3/2007 ກ່ຽວກັບການ ປັບປຸງ ລະບົບການຄຸ້ມຄອງດ່ານເຂົ້າອອກ ຄືນໃໝ່ ແລະ ແລະ ຄຳສັ່ງ ສະບັບເລກທີ 0453/ອຄ.ກຂອ, ລົງວັນທີ 26/03/2007 ກ່ຽວກັບການອຳນວຍຄວາມສະດວກໃຫ້ແກ່ ການ ນຳເຂົ້າ ແລະ ສົ່ງອອກສິນຄ້າ.
2. ກ່ອນຈະຖອນພະນັກງານການຄ້າທີ່ປະຈຳຢູ່ດ່ານກັບຄືນພະແນກໃຫ້ກວດກາຄືນອຸປະກອນ ຮັບໃຊ້ຕ່າງໆ ແລ້ວເຮັດບົດບັນທຶກ ມອບ-ຮັບຢ່າງຈະແຈ້ງ ເພື່ອຫຼີກເວັ້ນຊ່ອງຫວ່າງການຕົກເຮ່ຍ ເສຍຫາຍ.

3. ການບໍລິຫານການນຳເຂົ້າແລະສົ່ງອອກສິນຄ້າໃຫ້ ປະຕິບັດດັ່ງລຸ່ມນີ້ :

ໃຫ້ສືບຕໍ່ບໍລິຫານ ການນຳເຂົ້າ ແລະ ສົ່ງອອກສິນຄ້າ ສະເພາະ ແຕ່ບາງລາຍການ ທີ່ນອນໃນແຈ້ງການຂອງລັດຖະມົນຕີວ່າການກະຊວງອຸດສາຫະກຳແລະການຄ້າສະບັບ ເລກທີ 1376/ອຄ.ກຂອ ລົງວັນທີ 10/10/2006 ກ່ຽວກັບລາຍການ ສິນຄ້າທີ່ຄວບຄຸມ ການນຳເຂົ້າແລະສົ່ງອອກ ດັ່ງລຸ່ມນີ້ :

3.1. ລາຍການສິນຄ້ານຳເຂົ້າ ມີ : ລົດຮັບໃຊ້ການຜະລິດທາງກົງ , ເຂົ້າກິນ, ເຫຼັກ ແລະ ຊີມັງ

- ລົດຮັບໃຊ້ການຜະລິດທາງກົງ : ໃຫ້ສືບຕໍ່ອອກໃບອະນຸຍາດ ນຳເຂົ້າລົດ ຮັບໃຊ້ການ ຜະລິດທາງກົງ ຕາມ ແຈ້ງການ ສະບັບ ເລກທີ 1797/ອຄ.ກຂອ, ລົງວັນທີ 18/12/2006, ແຕ່ໃຫ້ປັບປຸງ ບາງເນື້ອໃນ ຂອງ ແບບຟອມ ໃບອະນຸຍາດນຳເຂົ້າລົດ ຄື :

  - ໃນຂໍ້3. ໃຫ້ປ່ຽນໃສ່ ວ່າ" ມອບໃຫ້ເຈົ້າໜ້າທີ່ ປະຈຳຢູ່ດ່ານອຳນວຍ ຄວາມສະດວກ ການນຳເຂົ້າ ຕາມລະບຽບການ ".

  - ໃນຂໍ້ 4 . ໃຫ້ປ່ຽນໃສ່ວ່າ : " ໃບອະນຸຍາດສະບັບນີ້ ມີທັງໝົດ 4 ສະບັບ ກຳນົດນຳໃຊ້ 90 ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ " ໝາຍຄວາມວ່າ ໃຫ້ອະນຸຍາດ 4 ສະບັບ, 2 ສະບັບ ສຳເນົາຢູ່ ພະແນກ ແລະ 2 ສະບັບ ສົ່ງໃຫ້ເຈົ້າຂອງ ເອກະສານ.

  - ໃນຂີດໜ້າທີ່1 ຂອງບ່ອນນຳສົ່ງ : ພະແນກອຸດສາຫະກຳ ແລະການຄ້າ ( ປປດ) 01 ( ສະບັບຕົ້ນ) ໃຫ້ປ່ຽນໃສ່ວ່າ ; ເຈົ້າໜ້າທີ່ພາສີ ປະຈຳດ່ານ 01 ສະບັບ ( ສະບັບຕົ້ນ).

- ເຂົ້າກິນ, ເຫຼັກ ແລະ ຊີມັງ : ໃຫ້ຕັດສິນການນຳເຂົ້າສິນຄ້າປະເພດ ເຂົ້າກິນ, ເຫຼັກ ແລະ ຊີມັງ ໂດຍໃຫ້ຄົ້ນຄ້ວາ ສະພາບການ ຜະລິດ, ການສະໜອງ ແລະ ຄວາມຕ້ອງການບໍລິໂພກ ຫຼື ຊົມໃຊ້ພາຍໃນແຂວງ, ເອົາໃຈໃສ່ສົ່ງເສີມຜະລິດຕະພັນທີ່ພາຍໃນປະເທດຜະລິດແລະຕອບສະໜອງໄດ້, ຮັບປະກັນບໍ່ໃຫ້ສິນຄ້າເຫຼືອບໍ່ພໍແລະ ລາຄາປັ່ນປ່ວນ. ສ່ວນວິທີຈັດຕັ້ງ ປະຕິບັດນັ້ນ ໃຫ້ແນະນຳ ຫົວໜ່ວຍທຸລະກິດໃຫ້ມີຄວາມຕື່ນຕົວຫັນມາຈຳໜ່າຍສິນຄ້າ ທີ່ພາຍໃນຜະລິດ ແລະ ຕອບສະໜອງໄດ້ ໂດຍໃຫ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕາມສະພາບຂອງແຕ່ລະແຂວງ ເຊັ່ນ : ເຂົ້າກິນ ແມ່ນໃຫ້ປະສານກັບພະແນກກະສິກຳ- ປ່າໄມ້, ລັດວິສາຫະກິດສະບຽງອາຫານ, ສະພາການຄ້າແລະອຸດສາຫະກຳ , ກຸ່ມຫຼືສະມາ ຄົມ ໂຮງງານທີ່ມີ ຄວາມຕ້ອງການ ນຳເຂົ້າ ເຂົ້າກິນ ເພື່ອເຂົ້າຮັບໃຊ້ ການຜະລິດແປ້ງ, ເສັ້ນໝີ່, ເສັ້ນເຝີ, ເຂົ້າປຽກ, ເຫຼົ້າ,ເບຍ , ເຂົ້າໜົມ ແລະ ອື່ນໆ. ສຳລັບ ເຫຼັກ ແລະ ຊີມັງ ແມ່ນໃຫ້ປະສານ ກັບກຸ່ມວັດສະດຸກໍ່ສ້າງ, ສະພາການຄ້າ ແລະ ອຸດສາ ຫະກຳ, ໂຮງງານ ຜະລິດເຫຼັກ ແລະ ຊີມັງ. ໃນກໍລະນີທີ່ເຫັນວ່າພາຍໃນບໍ່ສາມາດສະໜອງໄດ້ ຫຼື ມີແຕ່ບໍ່ພຽງພໍ ໃນການຕອບສະໜອງຈຶ່ງອະນຸຍາດໃຫ້ ອອກແຈ້ງການນຳເຂົ້າໃຫ້ພາກສ່ວນ ດັ່ງກ່າວຂ້າງເທິງ ເປັນແຕ່ລະໄລຍະ ຕາມຄວາມຕ້ອງການຕົວຈິງ.

3.2. ລາຍການສິນຄ້າສົ່ງອອກ ມີ : ຜະລິດຕະພັນແຮ່ທາດ ແລະ ໄມ້.

- ຜະລິດຕະພັນແຮ່ທາດ: ສືບຕໍ່ອອກໃບຕິດຕາມ ການສົ່ງອອກຜະລິດຕະພັນແຮ່ທາດ ໂດຍໃຫ້ອີງຕາມ ການອະນຸຍາດ ຈາກຂະແໜງທໍລະນີສາດແລະ ບໍ່ແຮ່ .
- ໄມ້ : ໃຫ້ປະຕິບັດຕາມເອກະສານດັ່ງລຸ່ມນີ້ :

- ຄຳສັ່ງຂອງສຳນັກງານນາຍົກລັດຖະມົນຕີ ສະບັບ ເລກທີ 31/ນຍ, ລົງວັນທີ 23/08/2006, ກ່ຽວກັບ ການເພີ່ມທະວີ ຄວາມເຂັ້ມງວດໃນການຄຸ້ມຄອງປ່າໄມ້, ທຸລະກິດໄມ້ ແລະສົ່ງເສີມອຸດສາຫະກຳ ປຸງແຕ່ງໄມ້ ເປັນຜະລິດຕະພັນສຳເລັດຮູບ,

- ແຈ້ງການຂອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0454/ອຄ.ກຂອ, ລົງວັນທີ26/03/2007, ການແບ່ງຄວາມຮັບຜິດຊອບການຈັດຕັ້ງປະຕິບັດ ຕາມຄຳສັ່ງເລກທີ 31/ນຍ,ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງປ່າໄມ້, ການທຸລະກິດ ໄມ້ ແລະ ສົ່ງເສີມອຸດສາ ຫະກຳ ປຸງແຕ່ງໄມ້ເປັນຜະລິດຕະພັນສຳເລັດຮູບ,

- ແຈ້ງການ ຂອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0552/ອຄ, ກຂອ, ລົງວັນທີ04/04/2007, ກ່ຽວກັບ ການຄຸ້ມຄອງ ຊື້-ຂາຍໄມ້ຢືດເປັນກຳມະສິດ ຂອງລັດປະເພດໄມ້ຂະຍູງ, ໄມ້ ດູ່ລາຍ,ໄມ້ຄຳພີ ແລະ ໄມ້ທີ່ມີຄ່າສູງອື່ນໆ,

- ແຈ້ງການຂອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0648/ອຄ.ກຂອ, ລົງວັນທີ 23/04/2007 ກ່ຽວກັບ ການຕິດຕາມການເຄື່ອນຍ້າຍ ຜະລິດຕະພັນໄມ້ຢູ່ພາຍໃນ ແລະ ສົ່ງອອກໄປຕ່າງປະເທດ,

- ລະບຽບການຊື້ຂາຍໄມ້ຢູ່ສະໜາມ II ສະບັບ ເລກທີ 0647/ອຄ.ກຂອ, ລົງວັນທີ 23/4/07.

4 ລາຍການສິນຄ້າອື່ນໆ (ນອກຈາກລາຍການຂ້າງເທິງ) ທີ່ລະບຸໄວ້ໃນ ແຈ້ງການສະບັບເລກທີ 1376/ກອຄ.ກຂອ ນັ້ນ ຖ້າແມ່ນນອນໃນການຄຸ້ມຄອງຂອງຂະແໜງການທີ່ກ່ຽວຂ້ອງ ສາມາດນຳເຂົ້າແລະສົ່ງອອກໄດ້ໂລດ ພາຍຫຼັງທີ່ໄດ້ຮັບອະນຸຍາດຈາກພາກສ່ວນດັ່ງກ່າວແລ້ວ. ບໍ່ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງວຽງຈັນ ອອກໃບອະນຸຍາດ ຫຼື ໃບຕິດຕາມ ກ່ອນການນຳເຂົ້າ ຫຼື ສົ່ງອອກ , ແຕ່ໃຫ້ ສົມທົບກັບພາກສ່ວນ ທີ່ກ່ຽວຂ້ອງ ຕິດຕາມຄວາມຕ້ອງການຕົວຈິງສິນຄ້າດັ່ງກ່າວໃນແຕ່ລະໄລຍະ ເພື່ອບໍ່ໃຫ້ກະທົບກະເທືອນຕໍ່ການ ຜະລິດ, ທຸລະກິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ.

5. ຕົວເລກຄາດຄະເນກ່ຽວກັບການນຳເຂົ້າແລະສົ່ງອອກທີ່ກະຊວງ ໄດ້ກຳນົດໃຫ້ນັ້ນ ແມ່ນເພື່ອຈຸດປະສົງເພື່ອຕິດຕາມສະພາບການຄ້າ ແລະ ສະພາບເສດຖະກິດຂອງແຂວງ, ນະຄອນຫຼວງວຽງຈັນ ແຕ່ບໍ່ແມ່ນການ ກຳນົດແຜນການ ເພື່ອນຳເຂົ້າ ແລະ ສົ່ງອອກ. ສຳລັບການນຳເຂົ້າແລະສົ່ງອອກ ສິນຄ້າ ທີ່ບໍ່ນອນໃນລາຍການສິນຄ້າທີ່ ຄວບຄຸມການນຳເຂົ້າ ແລະ ສົ່ງອອກ ແມ່ນໃຫ້ປະຕິບັດໄປຕາມກົນໄກຕະຫຼາດ.

6. ໃຫ້ແຕ່ງຕັ້ງພະນັກງານຮັບຜິດຊອບວຽກງານເກັບກຳຂໍ້ມູນສະຖິຕິ ການນຳເຂົ້າແລະ ສົ່ງອອກ ສິນຄ້າ, ຊຶ່ງຜູ້ກ່ຽວຕ້ອງໄດ້ພົວພັນ ສົມທົບເປັນປະຈຳກັບເຈົ້າໜ້າທີ່ພາສີ ປະຈຳແຕ່ລະ ດ່ານ ສຳລັບດ່ານທີ່ມີເງື່ອນໄຂ ຂໍໃຫ້ເຈົ້າໜ້າທີ່ພາສີ ຊ່ວຍ ສຳເນົາໃບແຈ້ງ ເສຍພາສີຂາອອກ, ຂາເຂົ້າ, ຂາອອກຕໍ່, ຜ່ານແດນ, ບຸກຄົນໃຫ້ພະນັກງານທີ່ລົງໄປເກັບກຳຂໍ້ມູນນັ້ນ . ການອັດສຳເນົາແມ່ນ ໃຫ້ເອົາແຕ່ໜ້າທຳອິດຂອງໃບແຈ້ງເສຍພາສີກໍໄດ້ ຊຶ່ງຕົ້ນຕໍແມ່ນຕ້ອງການຂໍ້ມູນດ້ານ ຊະນິດ ສິນຄ້າ, ຈຳນວນ, ມູນຄ່າປະເທດທີ່ນຳເຂົ້າ ແລະ ສົ່ງອອກ . ສຳລັບດ່ານທີ່ ບໍ່ມີເງື່ອນໄຂ ສະດວກ ຂໍໃຫ້ເຈົ້າໜ້າທີ່ພາສີ ປະຈຳດ່ານ ຊ່ວຍສະໜອງຂໍ້ມູນ ຕາມຮ່າງຕາຕະລາງ ຄັດຕິດ ມາພ້ອມນີ້.

7. ໃຫ້ສະຫຼຸບລາຍງານຂໍ້ມູນ, ສະຕິຖິ ການນຳເຂົ້າ ແລະ ສົ່ງອອກ ໃຫ້ກະຊວງ ຄືຜ່ານມາເປັນແຕ່ລະ ເດືອນ, ງວດ, 6 ເດືອນ, 9 ເດືອນ ແລະ 1 ປີ. ການກຳນົດສົ່ງ ບົດສະຫຼຸບ ລາຍງານ ສຳລັບ [illegible]ກີ ລາຍເດືອນນັ້ນ ແມ່ນໃຫ້ສົ່ງຮອດ ກົມການ ນຳເຂົ້າ ແລະ ສົ່ງອອກ ໃນວັນທີ 20 ຂອງ ທຸກໆເດືອນ ເວັ້ນເສຍແຕ່ ມີແຈ້ງການ ໃຫ້ສະຫຼຸບ ລາຍງານ ບາງວຽກງານ ທີ່ດ່ວນແລະມີລັກສະນະພິ[illegible]. ເພື່ອສະດວກ ໃນການເກັບກຳ ຂໍ້ມູນ ສະຖິຕິສິນຄ້ານຳເຂົ້າ ແລະ ສົ່ງອອກແຕ່ລະໄລຍະນັ້ນ ໃຫ້ເບິ່ງ ຕາມ ຕາຕະລາງ, ແບບຟອມທີ່ໄດ້ຄັດຕິດມາພ້ອມນີ້.

8. ຖ້າມີບັນຫາໃດທີ່ບໍ່ລະອຽດຫຼືມີຄວາມສັບສົນໃນການຈັດຕັ້ງປະຕິບັດໃຫ້ລາຍງານມາຍັງ ກະຊວງ ອຸດສາຫະກຳ ແລະ ການຄ້າ, ກົມການນຳເຂົ້າ ແລະ ສົ່ງອອກ ເພື່ອຊອກວິທີແກ້ໄຂ.

ຈຶ່ງແນະນຳມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຫົວໜ້າກົມການນຳເຂົ້າແລະ ສົ່ງອອກ,

ນຳສົ່ງ :

- ທ່ານລັດຖະມົນຕີ " ເພື່ອລາຍງານ "
- ລັດຖະມົນຕີ ຊ່ວຍວ່າການ "ເພື່ອລາຍງານ "
- ບັນດາກົມ, ຫ້ອງການພາຍໃນກະຊວງ "ເພື່ອຊາບ"
- ກົມພາສີ, ກະຊວງການເງິນ "ເພື່ອຊາບ"

...ງ ສຸທຳມະໄກດ